Washington State
Health Care Authority

# ທາງເລືອກເອົາການປິ່ນປົວສຸຂະພາບການປະພຶດສຳລັບເດັກນ້ອຍຊ່ວງວັຍຮຸ່ນ

ຊື່ຂອງຄົນເຈັບ　　　　　　　　　　　　　　　　　　　　ເລກບັນທຶກພະຍາບານ

ພໍ່ແມ່ ຫລື ຜູ້ປົກຄອງຈະໃຊ້ການຕີຣາຄາປະເມີນຜົນ ຫລື ການປິ່ນປົວສຳລັບສຸຂະພາບໂຣກຈິດ ຫລື ການຕິດຢາເສບຕິດສຳລັບເດັກນ້ອຍຊ່ວງວັຍຮຸ່ນອາຍຸ 13 ປີຫາ 17 ປີ ຕ້ອງຖືກແຈ້ງບອກກ່ຽວກັບການປິ່ນປົວທີ່ມີໄວ້ໃຫ້ຖືກຕ້ອງຕາມກົດໝາຍທຸກໆຢ່າງ. ການປິ່ນປົວເຫລົ່ານີ້ລວມເອົາການປິ່ນປົວທີ່ຖືກເລີ້ມຕົ້ນໃນວັຍເດັກນ້ອຍຊ່ວງວັຍຮຸ່ນ (ແຕ່ກ່ອນແມ່ນການປິ່ນປົວທີ່ຖືກເລີ້ມຕົ້ນໂດຍພໍ່ແມ່) , ແລະ ການເຂົ້າປິ່ນປົວໂດຍບໍ່ແມ່ນຕາມສະມັກໃຈ. ເລີ້ມຕົ້ນຕັ້ງແຕ່ເດືອນຈຸນລາຍ 2019, HB 1874 ໄດ້ຂະຍາຍຕົວອອກໄປໃນການເຂົ້າເຖິງການປິ່ນປົວສຸຂະພາບການປະພຶດຂອງເດັກນ້ອຍຊ່ວງວັຍຮຸ່ນ (BH) ໂດຍການຂະຫຍາຍກວ້າງອອກໃນຄຳເວົ້າຂອງການປິ່ນປົວທີ່ຖືກເລີ້ມຕົ້ນໂດຍ (FIT) ພາຍໃຕ້ກົດໝາຍ RCW 71.34 ທີ່ຈະລວມເອົາການປິ່ນປົວນອນໂຮງພະຍາບານ ແລະ ແນວທາງຊີ້ນຳກ່ຽວກັບລາຍຣະອຽດທີ່ສາມາດຖືກເປີດເຜີຍໃຫ້ແກ່ພໍ່ແມ່, ຜູ້ປົກຄອງ, ຫລື ຜູ້ໃຫ້ການປິ່ນປົວສຸຂະພາບການປະພຶດໂດຍປາສຈາກຄຳຍິນຍອມຂອງເດັກນ້ອຍຊ່ວງວັຍຮຸ່ນ.

## ການປິ່ນປົວທີ່ຖືກເລີ້ມຕົ້ນໂດຍເດັກນ້ອຍຊ່ວງວັຍຮຸ່ນ (RCW 71.34.500-530)

ເດັກນ້ອຍຊ່ວງວັຍຮຸ່ນ 13 ປີ ຫາ 17 ປີ, ຈະຮ້ອງຂໍເອົາການຕີຣາຄາເບິ່ງສຳລັບການປິ່ນປົວສຸຂະພາບໂຣກຈິດ ຫລື ການໃຊ້ຢາເສບຕິດທີ່ບໍ່ຕ້ອງນອນໂຮງພະຍາບານ ຫລື ນອນໂຮງພະຍາບານໂດຍປາສຈາກຄຳອະນຸຍາດຂອງພໍ່ແມ່. ຖ້າຫາກວ່າສະຖານທີ່ປິ່ນປົວເຫັນພ້ອມນຳຄວາມຕ້ອງການສຳລັບການປິ່ນປົວສຸຂະພາບໂຣກຈິດ ຫລື ການໃຊ້ຢາເສບຕິດທີ່ບໍ່ຕ້ອງນອນໂຮງພະຍາບານ, ເດັກນ້ອຍຊ່ວງວັຍຮຸ່ນຈະຖືກສະເນີການບໍຣິການປິ່ນປົວໃຫ້. ການເຂົ້ານອນໂຮງພະຍາບານຈະເກີດຂຶ້ນເທົ່ານັ້ນຖ້າຫາກວ່າຜູ້ຊ່ຽວຊານທີ່ຮັບຜິດຊອບຂອງສະຖານທີ່ປິ່ນປົວເຫັນພ້ອມນຳຄວາມຕ້ອງການສຳລັບການປິ່ນປົວນອນໂຮງພະຍາບານ. ສຳລັບເດັກນ້ອຍອາຍຸຕ່ຳກວ່າ 13 ປີ, ບໍ່ວ່າຈະແມ່ນການອະນຸຍາດຈາກພໍ່ແມ່ ຫລື ການອະນຸຍາດຈາກຜູ້ປົກຄອງທີ່ຖືກອະນຸມັດແມ່ນຕ້ອງມີສຳລັບການປິ່ນປົວນອນໂຮງພະຍາບານ.

## ການປິ່ນປົວທີ່ຖືກເລີ້ມຕົ້ນໂດຍຄອບຄົວ (RCW 71.34.600-670)

ພໍ່ແມ່, ຜູ້ປົກຄອງ, ພໍ່ລ້ຽງແມ່ລ້ຽງ,ຜູ້ເບິ່ງແຍງດູແລທີ່ເປັນຍາດພີ່ນ້ອງ ຫລື ບຸກຄົນທີ່ຖືກອະນຸຍາດຈະພາເອົາເດັກນ້ອຍຊ່ວັວັຍຮຸ່ນຂອງເຂົາເຈົ້າທີ່ມີອາຍຸ 13 ປີຫາ 17 ປີໄປຫາສະຖານທີ່ຕີຣາຄາເບິ່ງສຸຂະພາບໂຣກຈິດ ແລະ ສະຖານທີ່ປິ່ນປົວບ່ອນໃດກໍໄດ້, ໂຮງພະຍາບານ, ສະຖານທີ່ປິ່ນປົວນອນໂຮງພະຍາບານ ຫລື ໂຄງການປິ່ນປົວໂຣກການໃຊ້ຢາເສດຕິດ (SUD) ທີ່ຖືກອະນຸມັດ ແລະ ຮ້ອງຂໍເອົາການຕີຣາຄາເບິ່ງສຸຂະພາບໂຣກຈິດ ຫລື ການປະເມີນຜົນເບິ່ງໂຣກການໃຊ້ຢາເສບຕິດໃຫ້ຖືກກວດເບິ່ງໂດຍຜູ້ຊ່ຽວຊານເພື່ອຈະພິຈາຣະນາເບິ່ງວ່າເດັກນ້ອຍຕ່ຳກວ່າກະສຽນມີໂຣກສຸຂະພາບໂຣກຈິດ ຫລື ໂຣກການຕິດຢາເສບຕິດ ຫລື ບໍ່ ແລະ ຢູ່ໃນຄວາມຕ້ອງການການປິ່ນປົວນອນໂຮງພະຍາບານ ຫລື ບໍ່ນອນໂຮງພະຍາບານ ຫລື ບໍ່. ການປະເມີນຜົນເບິ່ງຢູ່ໃນສະພາບແວດລ້ອມແບບນອນໂຮງພະຍາບານບໍ່ສາມາດໃຊ້ເວລາດົນນານກວ່າ 72 ຊົ່ວໂມງ. ການອະນຸຍາດຂອງເດັກນ້ອຍຊ່ວງວັຍຮຸ່ນບໍ່ຕ້ອງມີກໍໄດ້ສຳລັບການປະເມີນຜົນເບິ່ງສຸຂະພາບໂຣກຈິດ ຫລື ໂຣກການໃຊ້ຢາເສບຕິດບໍ່ວ່າຈະແມ່ນບໍ່ນອນໂຮງພະຍາບານ ຫລື ນອນໂຮງພະຍາບານ. *ກະຣຸນາເບິ່ງການຕີຄວາມໝາຍໃໝ່ຂອງພໍ່ແມ່* ***RCW 71.34.020(25)(a)***.

**ກະຣຸນາສັງເກດ:** *ຈະບໍ່ມີບ່ອນບໍຣິການປິ່ນປົວບ່ອນໃດຈະຖືກຜູກມັດໃຫ້ເອົາການປິ່ນປົວໃຫ້ແກ່ເດັກນ້ອຍຊ່ວງວັຍຮຸ່ນພາຍໃຕ້ເງື່ອນໄຂຂອງ FIT. ເຖິງຢ່າງໃດກໍຕາມ, ການປະຕິເສດຂອງເດັກນ້ອຍຊ່ວງວັຍຮຸ່ນທີ່ຈະອະນຸຍາດຕໍ່ການປິ່ນປົວຈະບໍ່ເປັນພື້ນຖານຢ່າງດຽວສຳລັບການຕັດສິນໃຈຂອງສະຖານທີ່ປິ່ນປົວທີ່ຈະປະຕິເສດການບໍຣິການປິ່ນປົວ.*

## ການປິ່ນປົວບໍ່ນອນໂຮງພະຍາບານ ແລະ ການປິ່ນປົວບໍ່ນອນໂຮງພະຍາບານທີ່ເຂັ້ມງວດ ທີ່ຖືກເລີ້ມຕົ້ນໂດຍຄອບຄົວ

ຖ້າຫາກວ່າມັນຖືກພົບໂດຍຜູ້ຊ່ຽວຊານວ່າເດັກນ້ອຍຊ່ວງວັຍຮຸ່ນອາຍຸ 13-17 ປີມີໂຣກສຸຂະພາບໂຣກຈິດ ຫລື ໂຣກການໃຊ້ຢາເສບຕິດ, ແລະ ມັນມີຄວາມຕ້ອງການດ້ານ *ການປິ່ນປົວບໍ່ນອນໂຮງພະຍາບານ*, ການປິ່ນປົວສາມາດຖືກເອົາໃຫ້ແກ່ເດັກນ້ອຍຊ່ວງວັຍຮຸ່ນໄດ້ໂດຍຜ່ານ FIT. FIT ກ່າວເຈາະຈົງວ່າພໍ່ແມ່ຈະເຂົ້າເຖິງ ແລະ ອະນຸຍາດການປິ່ນປົວສຸຂະພາບໂຣກຈິດບໍ່ນອນໂຮງພະຍາບານ ແລະ/ຫລື SUD ຮອດ 12 ເທື່ອສຳລັບເດັກນ້ອຍຊ່ວງວັຍຮຸ່ນນຳຜູ້ຊ່ຽວຊານໂດຍສະເພາະພາຍໃນຣະຍະເວລາ 3 ເດືອນ. ຜູ້ຊ່ຽວຊານດ້ານການບໍ່ນອນໂຮງພະຍາບານທີ່ເອົາການປິ່ນປົວໃຫ້ຕ້ອງໄດ້ແຈ້ງບອກຜູ້ກວດເບິ່ງຄືນທີ່ມີສັນຍາຂອງ Health Care Authority (HCA) ທີ່ເດັກນ້ອຍຊ່ວງວັຍຮຸ່ນໄດ້ເລີ້ມຕົ້ນຮັບເອົາການປິ່ນປົວບໍ່ນອນໂຮງພະຍາບານພາຍໃນ 24 ຊົ່ວໂມງທຳອິດຂອງການປິ່ນປົວຂັ້ນຕົ້ນພາຍໃຕ້ການປິ່ນປົວທີ່ຖືກເລີ້ມຕົ້ນໂດຍຄອບຄົວ, ແລະຕື່ມອີກໃນທຸກໆ 45 ວັນຕະລອດຣະຍະເວລາ 3 ເດືອນ. ຫລັງຈາກຣະຍະເວລາຂອງການປິ່ນປົວ, ເດັກນ້ອຍຊ່ວງວັຍຮຸ່ນຕ້ອງໃຫ້ຄຳຍິນຍອມສຳລັບການປິ່ນປົວຕໍ່ໄປນຳຜູ້ໃຫ້ການປິ່ນປົວບໍ່ນອນໂຮງພະຍາບານບ່ອນດຽວກັນ.

## ການປິ່ນປົວນອນໂຮງພະຍາບານທີ່ຖືກເລີ້ມຕົ້ນໂດຍຄອບຄົວ

ຖ້າຫາກວ່າມັນຖືກພົບໂດຍຜູ້ຊ່ຽວຊານວ່າເດັກນ້ອຍຊ່ວງວັຍຮຸ່ນອາຍຸ 13-17 ປີມີໂຣກສຸຂະພາບໂຣກຈິດ ຫລື ໂຣກການໃຊ້ຢາເສບຕິດ, ແລະ ມັນມີຄວາມຕ້ອງການດ້ານການພະຍາບານສຳລັບການປິ່ນປົວນອນໂຮງພະຍາບານ, ພໍ່ແມ່ ຫລື ຜູ້ປົກຄອງຈະຮ້ອງຂໍໃຫ້ເດັກນ້ອຍຊ່ວງວັຍຮຸ່ນຖືກກັກຕົວໄວ້ສຳລັບການປິ່ນປົວ. ຖ້າຫາກວ່າໂຄງການນອນໂຮງພະຍາບານເຊື່ອວ່າເດັກນ້ອຍຊ່ວງວັຍຮຸ່ນຕ້ອງການທີ່ຈະຖືກກັກຕົວໄວ້ສຳລັບການປິ່ນປົວ, ສະຖານທີ່ປິ່ນປົວນອນໂຮງພະຍາບານຕ້ອງໄດ້ແຈ້ງບອກຜູ້ກວດເບິ່ງຄືນທີ່ມີສັນຍານຳ HCA ວ່າເດັກນ້ອຍຊ່ວງວັຍຮຸ່ນໄດ້ຖືກເອົາເຂົ້າໃສ່ການປິ່ນປົວພາຍໃຕ້ການປິ່ນປົວທີ່ຖືກເລີ້ມຕົ້ນໂດຍຄອບຄົວພາຍໃນ 24 ຊົ່ວໂມງຂອງການເຮັດການຕີຣາຄາປະເມີນຜົນແລ້ວ. ຖ້າຫາກວ່າໂຄງການນອນໂຮງພະຍາບານເຊື່ອວ່າເດັກນ້ອຍຊ່ວງວັຍຮຸ່ນຕ້ອງຖືກກັກຕົວໄວ້ຫລາຍກວ່າ 7 ວັນ, ໂຄງການນອນໂຮງພະຍາບານຕ້ອງໄດ້ແຈ້ງບອກ HCA ວ່າການກວດເບິ່ງໃໝ່ສຳລັບຄວາມຕ້ອງການທີ່ດຳເນີນຕໍ່ໄປຂອງຄວາມຕ້ອງການດ້ານການປິ່ນປົວນອນໂຮງພະຍາບານຕ້ອງຖືກເຮັດໃຫ້ສຳເຣັດ. ເດັກ

ນ້ອຍຊ່ວງວັຍຮຸ່ນຕ້ອງຖືກແຈ້ງບອກໂດຍສະຖານທີ່ປິ່ນປົວກ່ຽວກັບສິດທິຂອງເຂົາເຈົ້າທີ່ຈະຍື່ນການຟ້ອງຂຶ້ນສານສູງສຸດສຳລັບການປ່ອຍຕົວອອກຈາກສະຖານທີ່ປິ່ນປົວໂດຍບໍ່ໄວເກີນກວ່າຫ້າວັນຫລັງຈາກການກວດເບິ່ງຄືນ. ເດັກນ້ອຍຊ່ວງວັຍຮຸ່ນທຸກໆຄົນຜູ້ທີ່ຮັບເອົາການປິ່ນປົວພາຍໃຕ້ມາດຕານີ້ຕ້ອງຖືກປ່ອຍຕົວອອກຈາກສະຖານທີ່ປິ່ນປົວນອນໂຮງພະຍາບານພາຍໃນ 30 ວັນຂອງການກວດເບິ່ງຄືນຂອງຜູ້ກວດເບິ່ງຄືນທີ່ມີສັນຍານຳ HCA ນອກຈາກວ່າເດັກນ້ອຍຊ່ວງວັຍຮຸ່ນໄດ້ຖືກເອົາເຂົ້າໂຮງພະຍາບານພາຍໃຕ້ສະພາບຕາມສະມັກໃຈຫລື ຜູ້ຊ່ຽວຊານ ຫລື ຜູ້ຕອບຕໍ່ພາວະສຸກເສີນທີ່ຖືກແຕ່ງຕັ້ງ (DCR) ໄດ້ເລີ້ມຕົ້ນການຟ້ອງຂຶ້ນສານໂດຍບໍ່ສະມັກໃຈພາຍໃຕ້ພາກສ່ວນນີ້.

ຖ້າຫາກວ່າການກວດເບິ່ງຄືນຂອງຜູ້ກວດເບິ່ງຄືນທີ່ມີສັນຍານຳ HCA ພິຈາຣະນາເຫັນວ່າເດັກນ້ອຍຊ່ວງວັຍຮຸ່ນບໍ່ສອດຄ່ອງນຳກົດເກນການພະຍາບານຕໍ່ໄປອີກແລ້ວສຳລັບການປິ່ນປົວນອນໂຮງພະຍາບານ, ພໍ່ແມ່ ຫລື ຜູ້ປົກຄອງຕ້ອງຖືກແຈ້ງບອກໂດຍທັນທີໂລດ ແລະ ເດັກນ້ອຍຊ່ວງວັຍຮຸ່ນຕ້ອງຖືກປ່ອຍຕົວອອກໄປພາຍໃນ 24 ຊົ່ວໂມງ. ຢູ່ໃນກໍລະນີນີ້,ຖ້າຫາກວ່າພໍ່ແມ່ ຫລື ຜູ້ປົກຄອງ ແລະ ສະຖານທີ່ປິ່ນປົວ ທັງສອງ ເຊື່ອວ່າມັນເປັນການຈຳເປັນທາງດ້ານການພະຍາບານສຳລັບເດັກນ້ອຍຊ່ວງວັຍຮຸ່ນທີ່ຈະຍັງຢູ່ໃນການປິ່ນປົວນອນໂຮງພະຍາບານຢູ່, ສະຖານທີ່ປິ່ນປົວຈະກັກເດັກນ້ອຍໄວ້ຈົນກວ່າຮອດວັນຂຶ້ນສານວັນທີສອງທີ່ຕິດຕາມການກວດເບິ່ງຄືນຂອງ HCA. ອັນນີ້ຈະອະນຸຍາດໃຫ້ພໍ່ແມ່ ຫລື ຜູ້ປົກຄອງໃຫ້ມີເວລາທີ່ຈະຍື່ນການຟ້ອງຂຶ້ນສານກ່ຽວກັບວັຍຮຸ່ນຢູ່ໃນອັນຕະລາຍໂດຍອີງຕາມກົດໝາຍ **RCW 13.32A.191.** Family Reconciliation Services **(RCW 13.32A.040)** ຍັງຈະຖືກເອົາໃຫ້ອີກຄືກັນຜ່ານກົມ Department of Children, Youth, and Families (DCYF).

ເດັກນ້ອຍຊ່ວງວັຍຮຸ່ນທີ່ເຂົ້າຢູ່ໃນສະຖານທີ່ປິ່ນປົວນອນໂຮງພະຍາບານພາຍໃຕ້ການປິ່ນປົວທີ່ຖືກເລີ້ມຕົ້ນໂດຍຄອບຄົວຕ້ອງຖືກປ່ອຍຕົວອອກມາຈາກສະຖານທີ່ປິ່ນປົວໂດຍທັນທີໂລດຕາມຄຳຮ້ອງຂໍຂອງພໍ່ແມ່.

## ການປິ່ນປົວບໍ່ແມ່ນຕາມສະມັກໃຈ (RCW 71.34.700-795)

ຖ້າຫາກວ່າເດັກນ້ອຍຊ່ວງວັຍຮຸ່ນອາຍຸ 13 ປີ ຫລື ແກ່ກວ່າຜູ້ທີ່ສະແດງໃຫ້ເຫັນຄວາມຄ້າຍຄືວ່າຈະເຮັດໃຫ້ມີອັນຕະລາຍຮ້າຍແຮງຕໍ່ເຂົາເຈົ້າເອງຫລື ຄົນອື່ນໆ, ຜູ້ທີ່ ເສ່ຽງອັນຕະລາຍແຮງຈົນຈະເສັຽຊີວິດ ແລະ ອາດຈະຕ້ອງການການປິ່ນປົວສຸຂະພາບໂຣກຈິດນອນໂຮງພະຍາບານ ຫລື ການປິ່ນປົວນອນໂຮງພະຍາບານການໃຊ້ຢາເສບຕິດໂດຍທັນທີ ແລະ ປະຕິເສດທີ່ຈະອະນຸຍາດການເຂົ້າໂຮງພະຍາບານໂດຍສະມັກໃຈ, ເດັກນ້ອຍຊ່ວງວັຍຮຸ່ນອາດຈະຖືກກັກຕົວໄວ້ດົນນານເຖິງ 12 ຊົ່ວໂມງເພື່ອຈະເຮັດໃຫ້ DCR ທີ່ຈະຕີຣາຄາເບິ່ງເດັກນ້ອຍຊ່ວງວັຍຮຸ່ນສຳລັບການເຂົ້າໂຮງພະຍາບານໂດຍບໍ່ສະມັກໃຈທີ່ອາດຈະເປັນໄປໄດ້. ຖ້າຫາກວ່າບໍ່ມີທາງເລືອກໃນການປິ່ນປົວທາງອື່ນຕາມສະມັກໃຈ ຫລືທີ່ເຂັ່ງຂັດໜ້ອຍກວ່າມີໄວ້ໃຫ້, ແລະ DCR ພິຈາຣະນາເຫັນວ່າເດັກນ້ອຍຊ່ວງວັຍຮຸ່ນສະແດງໃຫ້ເຫັນຄວາມຄ້າຍຄືວ່າຈະເຮັດໃຫ້ມີອັນຕະລາຍຮ້າຍແຮງ ຫລື ເສ່ຽງອັນຕະລາຍຈົນຈະເສັຽຊີວິດ, ເນື່ອງເປັນຜົນມາຈາກໂຣກສຸຂະພາບໂຣກຈິດ ຫລື ໂຣກການໃຊ້ຢາເສບຕິດ, ເດັກນ້ອຍຊ່ວງວັຍຮຸ່ນອາດຈະຖືກກັກຕົວໄວ້ຢູ່ໃນສະຖານທີ່ປິ່ນປົວ. ເດັກນ້ອຍຊ່ວງວັຍຮຸ່ນມີແຕ່ຈະຖືກເອົາເຂົ້າໃສ່ໃນການປິ່ນປົວໂດຍບໍ່ສະມັກໃຈເທົ່ານັ້ນສຳລັບການປິ່ນປົວໂຣກການໃຊ້ຢາເສບຕິດຖ້າຫາກວ່າສະຖານທີ່ປິ່ນປົວໃຫ້ເຊົາຢາເສບຕິດ ຫລື ໂຄງການປິ່ນປົວໂຣກການໃຊ້ຢາເສບຕິດທີ່ຖືກອະນຸມັດຈະມີໄວ້ໃຫ້ ແລະ ມີບ່ອນວ່າງດີພຽງພໍສຳລັບເດັກນ້ອຍຕ່ຳກວ່າກະສຽນ.

ຖ້າຫາກວ່າເດັກນ້ອຍຊ່ວງວັຍຮຸ່ນໄດ້ເຂົ້າໄປຢູ່ໃນສະຖານທີ່ປິ່ນປົວສຸຂະພາບໂຣກຈິດ ຫລື ການໃຊ້ຢາເສບຕິດທີ່ນອນໂຮງພະຍາບານແລ້ວ, ເຂົາເຈົ້າອາດຈະຖືກພົບໂດຍຜູ້ຊ່ຽວຊານ ແລະ ພະນັກງານສຸຂະພາບໂຣກຈິດ ຫລື ການໃຊ້ຢາເສບຕິດພາຍໃນ 24 ຊົ່ວໂມງເພື່ອຈະພິຈາຣະນາເບິ່ງວ່າຈະຕິດຕາມນຳການດຳເນີນການຂຶ້ນສານໂດຍບໍ່ສະມັກໃຈຕໍ່ໄປອີກ ຫລື ບໍ່. ພາຍໃຕ້ກົດໝາຍການປິ່ນປົວໂດຍບໍ່ສະມັກໃຈ, ເດັກນ້ອຍຊ່ວງວັຍຮຸ່ນສາມາດຖືກໃນຂັ້ນຕົ້ນຖືກກັກຕົວໄວ້ສຳລັບການປິ່ນປົວຮອດ 72 ຊົ່ວໂມງ, ຍົກເວັ້ນວັນສຸດສັປະດາ ແລະ ວັນພັກບຸນ. ໃນຣະຫວ່າງເວລານີ້,ສະຖາບັນການປິ່ນປົວຈະຮ້ອງຂໍຂຶ້ນສານຂໍໃຫ້ເດັກນ້ອຍຊ່ວງວັຍຮຸ່ນຖືກຢູ່ຕໍ່ໄປເພີ້ມເຕີມອີກ 14 ວັນ, ຖ້າຫາກວ່າມັນເປັນທີ່ເຊື່ອວ່າການປິ່ນປົວຕໍ່ໄປອີກແມ່ນຈຳເປັນ. ໃນທ້າຍຂອງສິບສີ່ 14 ວັນ, ສະຖານທີ່ປິ່ນປົວອາດຈະຍື່ນຟ້ອງຂຶ້ນສານເພີ້ມອີກຮອດ 180 ວັນໃນການປິ່ນປົວນອນໂຮງພະຍາບານເພີ້ມເຕີມ.

ຖ້າຫາກວ່າ DCR ບໍ່ກັກເອົາເດັກນ້ອຍຊ່ວງວັຍຮຸ່ນໄວ້, ພໍ່ແມ່ ຫລື ຜູ້ປົກຄອງຈະຊອກເອົາການກວດເບິ່ງຄຳຕັດສິນຄືນ, ໂດຍອີງຕາມກົດໝາຍ 71.05.201, ໂດຍການຍື່ນຄຳແຈ້ງການນຳສານ ແລະ ການເອົາໃຫ້ໃບໂກປີ້ຂອງໃບລາຍງານ ແລະ/ຫລື ບັນທຶກຂອງ DCR.

ຖ້າຫາກວ່າເດັກນ້ອຍຊ່ວງວັຍຮຸ່ນໄດ້ຖືກປ່ອຍຕົວອອກຈາກການນອນໂຮງພະຍາບານດ້ວຍການປ່ອຍຕົວອອກມາທີ່ມີເງື່ອນໄຂ ຫລື ດ້ວຍຄຳສັ່ງຈາກສານອີກທາງນຶ່ງທີ່ເຂັ່ງຂັດໜ້ອຍກວ່າ, ແລະ ບໍ່ປະຕິບັດຕາມເງື່ອນໄຂຂອງການປ່ອຍຕົວອອກມາ ຫລື ຄຳສັ່ງຂອງສານອັນນັ້ນ, ຫລື ໄດ້ຊຸດໂຊມລົງຢ່າງຮ້າຍແຮງໃນການປະຕິບັດງານຂອງເຂົາເຈົ້າ, ເດັກນ້ອຍຊ່ວງວັຍຮຸ່ນສາມາດຖືກຕີຣາຄາ ແລະ ເອົາໃສ່ໃນຄວາມຄຸ້ມຄອງໂດຍ DCR ແລະ ຖືກຂົນສົ່ງໄປຫາສູນກາງປິ່ນປົວ ແລະ ຕີຣາຄາທີ່ນອນໂຮງພະຍາບານສຳລັບການປິ່ນປົວສຸຂະພາບໂຣກຈິດ ຫລື ເພື່ອຈະຊອກຫາສູນກາງປິ່ນປົວໃຫ້ຫາຍ ຫລື ໂຄງການປິ່ນປົວໂຣກການໃຊ້ຢາເສບຕິດທີ່ຖືກອະນຸຍາດ, ຖ້າຫາກວ່າສະຖານທີ່ປິ່ນປົວມີໄວ້ໃຫ້ຢູ່ ແລະ ມີບ່ອນວ່າງດີພຽງພໍສຳລັບເດັກນ້ອຍຊ່ວງວັຍຮຸ່ນສຳລັບການປິ່ນປົວໂຣກການໃຊ້ຢາເສບຕິດ. ເພື່ອຄວາມຊ່ວຍເຫລືອ ຫລື ຄຳຖາມເພີ້ມເຕີມ, ໂທຫາສາຍໂທພາວະສຸກເສີນສຸຂະພາບການປະພຶດທ້ອງຖິ່ນຂອງທ່ານ.

## ການແຈ້ງການກ່ຽວກັບການກວດເບິ່ງຄືນທີ່ຕ້ອງໄດ້ເຮັດຂອງຜູ້ໃຫ້ການປິ່ນປົວ

ພາຍໃນ 24 ຊົ່ວໂມງຂອງການເຂົ້າ FIT ຜູ້ໃຫ້ການປິ່ນປົວຕ້ອງໄດ້ແຈ້ງບອກຜູ້ກວດເບິ່ງຄືນທີ່ມີສັນຍານຳ HCA, ຫ້ອງການບໍລິຫານຂອງ FIT, ຜ່ານອີແມລ໌ທີ່ປອດໄພໄດ້ທີ່ fitreporting@fitadministration.com ຫລື ຜ່ານແຟກຊ໌ທີ່ປອດໄພໄດ້ທີ່ 206-859-6432

ການແຈ້ງບອກຕ້ອງລວມເອົາ:

- ຊື່ ແລະ ວັນເກີດ
- ວັນທີຂອງການເຂົ້າ FIT ຫລື ການປ່ຽນແປງໃນສະພາບຕໍ່ FIT
- ຄາວຕີບ່ອນທີ່ເດັກນ້ອຍຊ່ວງວັຍຣຸ່ນອາສັຍຢູ່, ແລະ
- ຊະນິດຂອງປະກັນໄພ

ໃນຣະຫວ່າງ 7 – 14 ວັນ ຂອງການເຂົ້າໂຮງພະຍາບານຂອງເດັກນ້ອຍຊ່ວງວັຍຣຸ່ນ, ແລະ ທຸກໆ 45 ວັນທີ່ການປິ່ນປົວທີ່ບໍ່ນອນໂຮງພະຍາບານ ຫລື ທີ່ບໍ່ນອນໂຮງພະຍາບານເຂັ້ມງວດ ດໍາເນີນຕໍ່ໄປ, ຜູ້ໃຫ້ການປິ່ນປົວຕ້ອງສົ່ງຣາຍຣະອຽດຕໍ່ລົງໄປນີ້ໃປຫານາຍໜ້າຂອງ HCA ເພື່ອການກວດເບິ່ງຄືນໃນຄວາມຈຳເປັນທາງດ້ານການພະຍາບານ:

- ເຈ້ຽໜ້າປົກຂອງການເຂົ້າໂຮງພະຍາບານ
- ບັນທຶກການປະເມີນຜົນເວລາຈິດຊື່
- ສະລຸບຄວາມຂອງການປ່ອຍຕົວອອກໂຮງພະຍາບານ

☐ ຂ້າພະເຈົ້າໄດ້ຖືກເອົາໃຫ້ດ້ວຍການແຈ້ງການເປັນລາຍລັກອັກສອນ ແລະ ປາກເປົ່າກ່ຽວກັບທາງເລືອກເອົາການປິ່ນປົວທີ່ມີໄວ້ໃຫ້ສໍາລັບເດັກນ້ອຍຊ່ວງວັຍຣຸ່ນ.

**ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ** ________________ **ວັນທີ** ______ **ລາຍເຊັນຂອງຜູ້ຕາງໜ້າຂອງສະຖານທີ່ປິ່ນປົວ** ________________ **ວັນທີ** ______

☐ **ບໍ່ສາມາດທີ່ຈະເອົາມາໄດ້ລາຍເຊັນ ຫລື ການຮັບຮູ້ຂອງພໍ່ແມ່ / ຜູ້ປົກຄອງ.**

ເຫດຜົນຂອງການບໍ່ມີລາຍເຊັນ:

ລາຍເຊັນຂອງຜູ້ຕາງໜ້າຂອງສະຖານທີ່ປິ່ນປົວ ________________ ວັນທີ ______

### ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບການປິ່ນປົວທີ່ຖືກເລີ້ມຕົ້ນໂດຍຄອບຄົວ, ກະຣຸນາຕິດຕໍ່ຫາ:

HCAFamilyInitiatedTreatment@hca.wa.gov

ຂ່າວຄືບໜ້າ

*ເດືອນມາກຊ໌ 17, 2020:*

- ການຕິດຕໍ່ທີ່ຖືກປ່ຽນແປງສຳລັບການເຂົ້ານອນໂຮງພະຍາບານ ແລະ ການກວດເບິ່ງຄືນໄປທີ່:
  **ຫ້ອງການບໍຣິຫານຂອງ FIT,** ຜ່ານອີແມລ໌ທີ່ປອດໄພໄດ້ທີ່ fitreporting@fitadministration.com ຫລື ຜ່ານແຟກຊ໌ທີ່ປອດໄພໄດ້ທີ່ 206-859-6432.